# ALIFOTATINI

**Generic name:** Fostamatinib Disodium Tablets
**Brand Name:** ALIFOTATINI
**Composition:**
Fostamatinib Disodium.......................................100mg.
**Indications:**

- ALIFOTATINI is a kinase inhibitor indicated for the treatment of thrombocytopenia in adult patients with chronic immune thrombocytopenia (ITP) who have had an insufficient response to a previous treatment.

**Dosage:**

- Initiate ALIFOTATINI at a dose of 100 mg taken orally twice daily. After a month, if platelet count has not increased to at least $50\times10^9$/L, increase ALIFOTATINI dose to 150 mg twice daily.
- ALIFOTATINI may be taken with or without food. In the case of a missed dose of ALIFOTATINI, instruct patients to take their next dose at its regularly scheduled time.
- Manage adverse reactions using dose reduction, interruption of treatment, or discontinuation.
- Discontinue ALIFOTATINI after 12 weeks of treatment if the platelet count does not increase to a level sufficient to avoid clinically important bleeding.

**Contraindications:**

- None.

**Warning:**

- Hypertension: Monitor blood pressure every 2 weeks until stable, then monthly.
- Hepatotoxicity: Monitor LFTs monthly.
- Diarrhea: Manage diarrhea with supportive measures. If diarrhea becomes severe, interrupt, reduce or discontinue ALIFOTATINI.
- Neutropenia: Monitor ANC monthly, and for infection. If neutrophil count decreases below $1.0 \times 10^9$/L, interrupt, reduce or discontinue ALIFOTATINI.
- Embryo-Fetal Toxicity: ALIFOTATINI can cause fetal harm. Advise patients of potential risk to a fetus and to use effective contraception.

**Adverse Effects:**

- Diarrhea, hypertension, nausea, respiratory infection, dizziness, ALT/AST increased, rash, abdominal pain, fatigue, chest pain and neutropenia.

**Dosage form:** Orange round tablets.
**Expiry date:** 36 months from the date of manufacture.
**Packaging:** 60 tablets/bottle.
**Storage:**

- Store at room temperature not exceeding 30℃.
- Please keep out of the reach of children.

**Manufactured by:**
Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ
# ALIFOTATINI

**ຊື່ທົ່ວໄປ:** Fostamatinib Disodium Tablets
**ຊື່ການຄ້າ:** ALIFOTATINI
**ສ່ວນປະກອບ:**
Fostamatinib Disodium.............................................100 mg

**ຂໍ້ບົ່ງໃຊ້:**
- ALIFOTATINI ເປັນຢາຢັບຢັ້ງ kinase inhibitor ທີ່ໃຊ້ໃນການປິ່ນປົວຄົນເຈັບຜູ້ໃຫຍ່ ທີ່ມີອາການເມັດເລືອດຕ່ຳຊຳເຮື້ອທີ່ເກີດຈາກພູມຄຸ້ມກັນ (chronic immune thrombocytopenia - ITP) ແລະ ຕອບສະໜອງຕໍ່ການປິ່ນປົວໃນຄັ້ງກ່ອນນີ້ໄດ້ບໍ່ພຽງພໍ.

**ວິທີນຳໃຊ້:**
- ນຳໃຊ້ຢາ ALIFOTATINI ໃນປະລິມານ 100 mg ກິນ 2 ເທື່ອຕໍ່ມື້, ຫຼັງຈາກນັ້ນ 1 ເດືອນ ຖ້າເຫັນວ່າຈຳນວນເມັດເລືອດບໍ່ເພີ່ມຂຶ້ນຢ່າງຕ່ຳ $50\times10^9$/L ໃຫ້ເພີ່ມປະລິມານຢາ ALIFOTATINI ເປັນ 150 mg 2 ເທື່ອຕໍ່ມື້.
- ສາມາດກິນຢາພ້ອມ ຫຼື ບໍ່ພ້ອມອາຫານກໍໄດ້, ໃນກໍລະນີລືມກິນຢາ ALIFOTATINI ໃຫ້ແນະນຳຄົນເຈັບກິນຢາຄັ້ງຕໍ່ໄປຕາມເວລາທີ່ໄດ້ກຳນົດ.
- ຖ້າມີຜົນຂ້າງຄຽງ ໃຫ້ຫຼຸດປະລິມານຢາ ຫຼື ຢຸດການປິ່ນປົວ.
- ຢຸດນຳໃຊ້ຢາ ALIFOTATINI ຫຼັງຈາກການປິ່ນປົວ 12 ອາທິດ, ຫາກຈຳນວນເມັດເລືອດບໍ່ເພີ່ມຂຶ້ນຈົນເຖິງລະດັບທີ່ພຽງພໍ ທີ່ຈະປ້ອງກັນການມີເລືອດອອກ ຕາມຈຸດສຳຄັນທາງດ້ານຄຼີນິກ.

**ຂໍ້ຫ້າມໃຊ້:**
- ບໍ່ມີ.

**ຄຳເຕືອນ:**
- ຄວາມດັນເລືອດສູງ: ກວດວັດແທກຄວາມດັນເລືອດທຸກໆ 2 ອາທິດ ຈົນກວ່າຄວາມດັນເລືອດຈະຄົງທີ່ແລ້ວ, ປ່ຽນໃຫ້ວັດແທກທຸກໆເດືອນ.
- ຄວາມເປັນພິດຕໍ່ຕັບ: ກວດວັດແທກຄ່າ (LFTs) ທຸກເດືອນ.
- ຖອກທ້ອງ: ປິ່ນປົວອາການຖອກທ້ອງຕາມມາດຕະການດ້ານການປິ່ນປົວ, ຖ້າອາການຖອກທ້ອງຮຸນແຮງໃຫ້ພັກ, ຫຼຸດ ຫຼື ຢຸດນຳໃຊ້ຢາ ALIFOTATINI.
- ພາວະເມັດເລືອດຂາວ (Neutropenia) ຕ່ຳ: ກວດວັດແທກ ANC ທຸກເດືອນ ແລະ ເພື່ອຕິດຕາມອາການຕິດເຊື້ອ, ຖ້າຈຳນວນເມັດເລືອດຂາວຫຼຸດລົງ $1.0\times10^9$/L ໃຫ້ພັກ, ຫຼຸດ ຫຼື ຢຸດນຳໃຊ້ຢາ ALIFOTATINI.
- ພິດຕໍ່ຕົວອ່ອນ ແລະ ເດັກໃນທ້ອງ: ALIFOTATINI ອາດເຮັດໃຫ້ເກີດອັນຕະລາຍຕໍ່ເດັກໃນທ້ອງ, ແນະນຳໃຫ້ໃຊ້ວິທີການຄຸມກຳເນີດ ຢ່າງມີປະສິດທິພາບ.

**ຜົນຂ້າງຄຽງ:**
- ຖອກທ້ອງ, ຄວາມດັນເລືອດສູງ, ປວດຮາກ, ຕິດເຊື້ອທາງລະບົບຫາຍໃຈ, ວິນຫົວ, ຄ່າໜ້າທີ່ການທຳງານຂອງຕັບ ALT/AST ສູງຂຶ້ນ, ອອກຕຸ່ມພິດຜື່ນ, ເຈັບທ້ອງ, ອ່ອນເພຍ, ເຈັບໜ້າເອິກ ແລະ ເມັດເລືອດຂາວຕ່ຳ.

**ຮູບແບບຂອງຢາ:** ຢາເມັດມົນສີສົ້ມ.
**ຂະໜາດບັນຈຸ:** ບັນຈຸໃນກ່ອງ, 1 ກ່ອງມີ 60 ເມັດ.
**ວັນໝົດອາຍຸ:** 36 ເດືອນ ນັບຫຼັງຈາກວັນທີຜະລິດ.
**ການເກັບຮັກສາ:**
- ເກັບຮັກສາໄວ້ໃນອຸນຫະພູມຫ້ອງບໍ່ໃຫ້ເກີນ 30°C.
- ເກັບຮັກສາໄວ້ໃຫ້ຫ່າງໄກຈາກມືເດັກ.

**ຜະລິດໂດຍ:**
ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com